ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ-ປ່າໄມ້ /ເລກທີ 0445 /ກປ.

# ຄຳແນະນຳ

ອຸດົມ ສີປະ

ຮຽນ : - ພະແນກກະສິກຳ-ປ່າໄມ້ແຂວງ, ກຳແພງນະຄອນວຽງຈັນ ແລະ ເຂດພິເສດຊຽງຮ່ອນ-ຫົງສາ.
- ຫ້ອງການກະສິກຳ-ປ່າໄມ້ເມືອງ.

ເລື່ອງ : ການສ້າງກົດລະບຽບຂອງບ້ານ ເພື່ອປົກປັກຮັກສາຊັບພະຍາກອນແຫຼ່ງນ້ຳ ແລະ ປາທຳມະຊາດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດໜຶ່ງທີ່ອຸດົມສົມບູນໄປດ້ວຍແມ່ນ້ຳລຳເຊ, ຫ້ວຍ, ໜອງ, ຄອງ, ບຶງ ຊຶ່ງເປັນບ່ອນຢູ່ອາໄສຂອງປາທຳມະຊາດນາໆຊະນິດ ແລະ ສັດນ້ຳອື່ນໆ. ປາທຳມະຊາດເປັນອາຫານສຳຄັນທີ່ຂາດບໍ່ໄດ້, ໃນໄລຍະຜ່ານມາປາທຳມະຊາດແມ່ນອຸດົມຮັ່ງມີພໍສົມຄວນທາງດ້ານຊະນິດແລະຈຳນວນ ຊຶ່ງສາມາດລ້ຽງຊີບຄົນລາວໃນທົ່ວປະເທດໄດ້. ແຕ່ມາເຖິງປະຈຸບັນປາທຳມະຊາດເຫຼົ່ານັ້ນໄດ້ຖືກໜ້ອຍຫຼຸດລົງຢ່າງໜ້າວິຕົກ ຊຶ່ງໄດ້ເລີ່ມສົ່ງຜົນສະທ້ອນອັນບໍ່ດີມາສູ່ການດຳລົງຊີວິດຂອງປະຊາຊົນ. ທັງນີ້ກໍຍ້ອນວ່າການຫາປາແບບດັບສູນ ແລະການລົບກວນທຳລາຍສະພາບແວດລ້ອມຂອງແຫຼ່ງນ້ຳ ຊຶ່ງເປັນບ່ອນທີ່ຢູ່ອາໄສຂອງມັນ. ຖ້າຫາກວ່າຍັງປະປ່ອຍໃຫ້ສະພາບທີ່ກ່າວຂ້າງເທິງນັ້ນແກ່ຍາວຕໍ່ໄປອີກ, ປາຈຳນວນດັ່ງກ່າວທີ່ເຄີຍມີຢູ່ຕາມແຫຼ່ງນ້ຳທຳມະຊາດກໍອາດຈະສູນພັນໄປຢ່າງບໍ່ຕ້ອງສົງໄສ.

- ຍ້ອນເຫັນແຈ້ງແລະຮັບຮູ້ຕໍ່ສະພາບການຜັນແປຂອງປາທຳມະຊາດ, ປະຊາຊົນເຂດເມືອງໂຂງ ແຂວງຈຳປາສັກທີ່ເຄີຍອາໄສ ປາທຳມະຊາດເປັນອາຫານແລະອາຊີບສຳຮອງຄົງໄດ້ເລີ່ມ ວາງແຜນກ່ຽວກັບການຄຸ້ມຄອງ ແລະປົກປັກຮັກສາປາທຳມະຊາດທີ່ມີຢູ່ໃນປະຈຸບັນໃຫ້ອຸດົມສົມບູນ ແລະ ຍືນຍົງຄົງຕົວຕະຫຼອດໄປ.

ໃນຫຼາຍໝູ່ບ້ານກໍໄດ້ຕົກລົງເປັນເອກະພາບສ້າງກົດລະບຽບສະເພາະ, ຊຶ່ງໃນເບື້ອງຕົ້ນໄດ້ມີການກຳນົດລະບຽບການ ແລະຂໍ້ຫ້າມດັ່ງນີ້ :

- ກຳນົດວັງສະຫງວນເຂດຫ້າມຫາປາ
- ຢຸດເຊົາການຕັນຫ້ວຍຮ່ອງໃນລະດູທີ່ປາຂຶ້ນລ່ອງ
- ຢຸດເຊົາການໄຕ້ (ກ້ານ) ປາແລະກົບໃນຕອນກາງຄືນເປັນບາງແຫ່ງ
- ຢຸດເຊົາການໃສ່ມອງເອົາປາດ້ວຍຮູບແບບທຳລາຍ ( ໄລ່ປາໃສ່ມອງ )
- ຢຸດເຊົາທຳລາຍຕົ້ນໄມ້ໃນນ້ຳ ຊຶ່ງເປັນແຫຼ່ງທີ່ຢູ່ອາໄສຂອງປາທຳມະຊາດ
- ຈຳກັດການຫາປາຂອງຄົນພາຍນອກບ້ານໃນຂອບເຂດທີ່ບ້ານຕົນຮັບຜິດຊອບ.

ນອກຈາກນັ້ນ ກົດລະບຽບຍັງໄດ້ເນັ້ນເຖິງຄວາມໝາຍສຳຄັນ ແລະການປົກປັກຮັກສາພໍ່ພັນແລະແມ່ພັນປາ ເພື່ອສ້າງເງື່ອນໄຂໃຫ້ມັນໄດ້ວາງໄຂ່ ແລະຂະຫຍາຍພັນຕາມລະດູການ.

ກົດລະບຽບສະບັບນີ້ສ້າງຂຶ້ນບໍ່ແມ່ນເພື່ອຈຸດປະສົງຫ້າມບໍ່ໃຫ້ປະຊາຊົນຫາປາ ແຕ່ແມ່ນການກຳນົດເຂດອະນຸຍາດໃຫ້ຫາປາ, ເຂດຫ້າມຫາປາ, ລະດູການໃດຄວນຫາປາ ແລະ ບໍ່ຄວນຫາປາ ແລະ ການຫາປາດ້ວຍວິທີໃດຈຶ່ງຈະບໍ່ເຮັດໃຫ້ຈຳນວນ ແລະຊະນິດຂອງປາທຳມະຊາດຖືກດັບສູນ.

ສະນັ້ນ ເພື່ອຄຸ້ມຄອງແລະປົກປັກຮັກສາໄວ້ຊຶ່ງຊັບພະຍາກອນແຫຼ່ງນ້ຳແລະປາທຳມະຊາດໃຫ້ພົນປົງຄົງຕົວ ແລະຂະຫຍາຍຕົວສືບຕໍ່ໄປ, ກະຊວງກະສິກຳ-ປ່າໄມ້ ຈຶ່ງຂໍສະເໜີບາງວິທີການໃນການສ້າງກົດລະບຽບບ້ານ ດັ່ງລາຍລະອຽດລຸ່ມນີ້ :

1)- ກົດລະບຽບຕ້ອງສ້າງຂຶ້ນບົນຄວາມສະມັກໃຈເປັນຕົວຂອງປະຊາຊົນ ແລະຕ້ອງປະຕິບັດທິດນຳທີ່ວ່າ ກົດລະບຽບມາຈາກປະຊາຊົນ ແລະໄປຫາປະຊາຊົນເປັນຜູ້ປະຕິບັດ

ສະນັ້ນ ກ່ອນອື່ນໝົດອຳນາດການປົກຄອງບ້ານດ້ວຍການຊຸກຍູ້ຂອງຂະແໜງກະສິກຳ-ປ່າໄມ້ ຕ້ອງຈັດຕັ້ງກອງປະຊຸມບ້ານເປັນເອງຂຶ້ນ ເພື່ອປຶກສາຫາລືກ່ຽວກັບການປົກປັກຮັກສາປາທຳມະຊາດ ແລະ ຄົ້ນຄວ້າຫາຊ່ອງທາງເປັນໄປໄດ້ເພື່ອວາງກົດລະບຽບຄຸ້ມຄອງແຫຼ່ງນ້ຳທີ່ເລືອກໄດ້ແບ່ງປັນໃຫ້ຮັບຜົນຄົບ. ໃນກອງປະຊຸມອາດຈະເຊີນເອົາຕາງໜ້າອຳນາດການປົກຄອງຂັ້ນເມືອງເຂົ້າຮ່ວມ ເພື່ອຮ່ວມຮັບຟັງ ແລະ ຊ່ວຍປະກອບຄຳຄິດຄຳເຫັນ.

2)- ຜ່ານຈາກການຄົ້ນຄວ້າແລະປຶກສາຫາລື, ເມື່ອ ເຫັນວ່າປະຊາຊົນສ່ວນຫຼວງຫຼາຍມີຄວາມເຫັນດີເຫັນພ້ອມກ່ຽວກັບການສ້າງກົດລະບຽບບ້ານ, ອຳນາດການປົກຄອງຕ້ອງສ້າງບົດບັນທຶກເຊັນຮັບຮູ້ຈາກນາຍບ້ານ, ແນວໂຮມ, ສະມາຄົມແມ່ຍິງ, ຊາວໜຸ່ມ ແລະ ປ.ກ.ສ ບ້ານ. ຈາກນັ້ນຖ້າເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງສ້າງວັງສະຫງວນ, ຈຶ່ງນຳເຂົ້າຄົ້ນຄວ້າແລະປຶກສາຫາລືໃນກອງປະຊຸມໃໝ່ຄືນອີກ. ການສ້າງວັງສະຫງວນອາດມີຫຼາຍຮູບການ ເຊັ່ນ : ຫ້າມຫາປາຊ່ວງລະດູການ ຫ້າມເປັນລະດູການ ຫຼື ອະນຸຍາດໃຫ້ຫາຕະຫຼອດປີ ແຕ່ມີການກຳນົດເຄື່ອງມືຫາປາ.

ຖ້າຫາກວ່າເຂດນີ້ມີບ້ານອື່ນມາຫາປາໃນເຂດບ້ານເປັນຂອງຮັບຜົນຄົບ ກໍຕ້ອງປຶກສາຫາລືກັບອຳນາດການປົກຄອງ ແລະຊາວບ້ານໆກ່ຽວຂ້ອງນັ້ນໃຫ້ເປັນເອກະພາບ.

3)- ຫຼັງຈາກຜ່ານບົດບັນທຶກການຕົກລົງຢູ່ຂັ້ນບ້ານ ກໍສະເໜີຜ່ານຫ້ອງການກະສິກຳ-ປ່າໄມ້ເມືອງ ແລ້ວນຳສະເໜີຕໍ່ ຂໍຄຳເຫັນຈາກທ່ານເຈົ້າເມືອງ ເພື່ອຂໍອະນຸມັດ. ພາຍຫຼັງໄດ້ຮັບອະນຸມັດແລ້ວ ຈຶ່ງຕິດປ້າຍໃສ່ເຂດວັງສະຫງວນດັ່ງກ່າວນັ້ນ.

4)- ຜ່ານຈາກການປະຕິບັດຕົວຈິງໄປໃນໄລຍະນຶ່ງແລ້ວ ກໍອາດຈະເຫັນວ່າບາງລະບຽບການບໍ່ສອດຄ່ອງ ກໍຄວນນຳສະເໜີຜ່ານກອງປະຊຸມຄືນອີກເພື່ອດັດແກ້ ຫຼື ເພີ້ມເຕີມຕາມຄວາມເໝາະສົມ ແລະຕົກລົງຂອງກອງປະຊຸມນັ້ນ.

5)- ໃນກໍລະນີມີຜູ້ລະເມີດຝ່າຝືນກົດລະບຽບ, ອຳນາດການປົກຄອງບ້ານມີສິດສຶກສາອົບຮົມ ກ່າວເຕືອນ ຫຼື ປັບໃໝຕາມຄວາມເໝາະສົມ.

ດັ່ງນັ້ນ ຈຶ່ງແຈ້ງມາເພື່ອຊາບ.

ວຽງຈັນ, ວັນທີ

ລັດຖະມົນຕີວ່າການກະຊວງກະສິກຳ-ປ່າໄມ້.

ສີສະຫວາດ ແກ້ວບຸນພັນ

ບ່ອນເບິ່ງ :

1. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
( ໄວ້ຕາງລາຍງານ )
1. ເຈົ້າແຂວງທຸກ ແຂວງ
2. ເຈົ້າເມືອງທຸກ ເມືອງ
3, ກົມປ່າໄມ້
4. ເກັບມ້ຽນ